ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງທະນາຄານທຸລະກິດ

ເລກທີ 684 /ກຄທ

ນະຄອນຫຼວງວຽງຈັນ, ວັນທີ 10 ທັນວາ 2019

# ແຈ້ງການ

**ເຖິງ :** ທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

**ເລື່ອງ:** ການໃຫ້ກູ້ ຫຼື ຮັບເງິນກູ້ກັບຕ່າງປະເທດຂອງທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມດຳລັດວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 3 ຕຸລາ 2012;
- ອີງຕາມຂໍ້ຕົກລົງວ່າດ້ວຍການນຳທຶນເຂົ້າ-ອອກ ສປປ ລາວ ແລະ ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າກັບຕ່າງປະເທດ ເລກທີ 453/ທຫລ, ລົງວັນທີ 30 ພຶດສະພາ 2019.

ເພື່ອຈັດຕັ້ງຜັນຂະຫຍາຍມາດຕາ 10 ຂອງຂໍ້ຕົກລົງວ່າດ້ວຍ ການນຳທຶນເຂົ້າ-ອອກ ສປປ ລາວ ແລະ ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າກັບຕ່າງປະເທດ ເລກທີ 453/ທຫລ, ລົງວັນທີ 30 ພຶດສະພາ 2019, ທັງເປັນບ່ອນອີງໃຫ້ແກ່ທະນາຄານແຫ່ງ ສປປ ລາວ ໃນການພິຈາລະນາອະນຸມັດ ແລະ ຄຸ້ມຄອງການໃຫ້ກູ້ ຫຼື ຮັບເງິນກູ້ກັບຕ່າງປະເທດຂອງທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ໃຫ້ສອດຄ່ອງກັບສະພາບທຸລະກິດ, ຄວາມຈຳເປັນ ແລະ ຄວາມອາດສາມາດໃນການຊຳລະຄືນ, ແນ່ໃສ່ຊຸກຍູ້ໃຫ້ທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ມີການບໍລິຫານ ແລະ ນຳໃຊ້ເງິນກູ້ຢືມຢ່າງມີປະສິດທິຜົນ, ຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນ ແລະ ຮັບປະກັນຄວາມໝັ້ນຄົງຂອງທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ໃນ ສປປ ລາວ.

ສະນັ້ນ, ກົມຄຸ້ມຄອງທະນາຄານທຸລະກິດ ຈຶ່ງແຈ້ງມາຍັງບັນດາທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ມີຈຸດປະສົງໃຫ້ກູ້ ຫຼື ຮັບເງິນກູ້ກັບຕ່າງປະເທດ ຕ້ອງສະເໜີຂໍອະນຸຍາດ ຈາກກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ໃນກໍລະນີເປັນສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຊຶ່ງລາຍລະອຽດມີດັ່ງນີ້:

1. **ສຳນວນເອກະສານສະເໜີຂໍອະນຸຍາດ ປະກອບມີດັ່ງນີ້:**

1.1. ໜັງສືສະເໜີ ຂໍອະນຸຍາດໃຫ້ກູ້ ຫຼື ຮັບເງິນກູ້ ກັບຕ່າງປະເທດ ໂດຍລະບຸລາຍລະອຽດຂອງການໃຫ້ກູ້ ຫຼື ຮັບເງິນກູ້ ທີ່ລະອຽດຊັດເຈນ ດັ່ງນີ້:



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

(1) ກໍລະນີໃຫ້ກູ້ກັບຕ່າງປະເທດໃຫ້ລະບຸ ຊື່, ທີ່ຢູ່, ຖານະການເງິນ ແລະ ການດຳເນີນທຸລະກິດໂດຍລວມຂອງຜູ້ຮັບເງິນກູ້, ປະເພດການໃຫ້ກູ້ຢືມ, ເປົ້າໝາຍນຳໃຊ້ເງິນກູ້ຂອງຜູ້ກູ້ຢືມ, ໄລຍະເວລາການກູ້ຢືມ, ອັດຕາດອກເບ້ຍ, ຄ່າທຳນຽມຕ່າງໆ ແລະ ແຜນການຊຳລະໜີ້ຄືນ;

(2) ກໍລະນີຮັບເງິນກູ້ກັບຕ່າງປະເທດໃຫ້ລະບຸ ຊື່, ທີ່ຢູ່, ການດຳເນີນທຸລະກິດໂດຍລວມຂອງຜູ້ໃຫ້ກູ້ຢືມ, ປະເພດເງິນກູ້ຢືມ, ເປົ້າໝາຍນຳໃຊ້ເງິນກູ້, ໄລຍະເວລາການກູ້ຢືມ, ອັດຕາດອກເບ້ຍ, ຄ່າທຳນຽມຕ່າງໆ, ແຜນການນຳໃຊ້ແຫຼ່ງທຶນທີ່ກູ້ຢືມ, ແຫຼ່ງທຶນທີ່ໃຊ້ຊຳລະ, ແຜນການສຳຮອງເງິນຕາຕ່າງປະເທດເພື່ອຊຳລະ, ແຜນການເບີກຖອນເງິນ ແລະ ຊຳລະໜີ້ເງິນກູ້. ຜູ້ໃຫ້ກູ້ຢືມ ຕ້ອງເປັນສະຖາບັນການເງິນ ຫຼື ນິຕິ ບຸກຄົນ ທີ່ໄດ້ຮັບອະນຸຍາດໃຫ້ສາມາດປ່ອຍກູ້ທົ່ວໄປ ຢ່າງຖືກຕ້ອງຕາມກົດໝາຍຂອງປະເທດນັ້ນໆ;

1.2. ທະນາຄານ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕ້ອງມີມະຕິຕົກລົງຂອງສະພາບໍລິຫານ ຫຼື ຜູ້ມີສິດອຳນາດອະນຸຍາດໃຫ້ກູ້ ຫຼື ຮັບເງິນກູ້ ກັບຕ່າງປະເທດ. ສຳລັບສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງໄດ້ຮັບການຕົກລົງຈາກສຳນັກງານໃຫຍ່;

1.3. ຮ່າງສັນຍາກູ້ຢືມ ຫຼື ໜັງສືສະເໜີເງື່ອນໄຂໃຫ້ກູ້ (Term Sheet);

1.4. ເອກະສານອື່ນໆທີ່ກ່ຽວຂ້ອງ ຕາມການຮຽກຮ້ອງຂອງກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ.

ເອກະສານຂ້າງເທິງ ຕ້ອງປະກອບເປັນພາສາລາວ. ໃນກໍລະນີເອກະສານສ້າງຂຶ້ນເປັນພາສາຕ່າງປະເທດ ຕ້ອງແປເປັນພາສາລາວ ໂດຍມີການຢັ້ງຢືນການແປຈາກສຳນັກງານທະບຽນສານ.

2. **ການພິຈາລະນາ:**

2.1. ພາຍຫຼັງທີ່ໄດ້ຮັບສຳນວນເອກະສານ ໃນການຂໍອະນຸຍາດໃຫ້ກູ້ ຫຼື ຮັບເງິນກູ້ ກັບຕ່າງປະເທດ ຄົບຖ້ວນ ແລະ ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ຈະດຳເນີນການພິຈາລະນາຕົກລົງເຫັນດີດ້ານຫຼັກການ ຫຼື ແຈ້ງຕອບປະຕິເສດພາຍໃນກຳນົດເວລາ 15 (ສິບຫ້າ) ວັນລັດຖະການ.

2.2. ທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບໜັງສືເຫັນດີດ້ານຫຼັກການຈາກກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ຕ້ອງປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ໃນໜັງສືດັ່ງກ່າວ ຕາມແຕ່ລະກໍລະນີ ແລ້ວຍື່ນສັນຍາເງິນກູ້ສະບັບສຳເນົາ 1 ສະບັບ ໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ຫຼື ກົມຄຸ້ມຄອງສະຖາບັນການເງິນ ພາຍໃນກຳນົດເວລາ 15 ວັນ ພາຍຫຼັງການລົງລາຍເຊັນຂອງຄູ່ສັນຍາ.

3. **ລະບອບລາຍງານ:** ທະນາຄານ ທີ່ໄດ້ຮັບການເຫັນດີ ໃຫ້ກູ້ ຫຼື ຮັບເງິນກູ້ກັບຕ່າງປະເທດ ຕ້ອງລາຍງານການຈັດຕັ້ງປະຕິບັດສັນຍາເງິນກູ້ໃຫ້ກົມຄຸ້ມຄອງທະນາຄານທຸລະກິດຊາບ ຫຼື ກົມຄຸ້ມຄອງສະຖາບັນການເງິນ ໃນກໍລະນີເປັນສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຕາມແບບພິມ ແລະ ກຳນົດເວລາ ທີ່ກຳນົດໄວ້ໃນແຕ່ລະໄລຍະ (ລາຍລະອຽດເອກະສານຄັດຕິດ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ວ່າການຫົວໜ້າກົມ

ທະນາຄານແຫ່ງ ສ. ປ. ປ. ລາວ ★ ກົມຄຸ້ມຄອງທະນາຄານທຸລະກິດ ★

ໂພທິຈັນ ທຳມະເທວາ